# The Publisher’s Note

**July 2006** ຈາກໃຈຂອງຜູ້ພິມ **"ນິຕຍະສາຣລາວເນັດທ໌"**

Although we scheduled to publish our third issue in June, we were behind schedule and could not do so until July 2006 due to some technical difficulties. As we promised our readers in our last issue, LAONET MAGAZINE will publish six times per year.

As you may notice, LAONET MAGAZINE finally has its own logo in addition to its parent company’s logo ASIANET.COM. We have also purchased additional Lao fonts from Laos. Due to repeated requests, we are testing a new column LAONET PERSONALS and would appreciate any feedback.

We would like to thank those of you who submitted articles. As we received a very large number of Lao articles, we could not publish them all. We also like to thank those of you who helped us to distribute our magazine. Again, LAONET MAGAZINE will continue to earn your trust, support and encouragements.

The Publisher





ລາວເນັຕຕ້ອງຂໍອະພັຍກັບທ່ານຜູ້ອ່ານທີ່ບໍ່ສາມາດພິມສະບັບທີ່ສາມອອກມາທັນໃນ ເດືອນ ມິຖຸນາ 2006ເພາະມີປັນຫາທາງດ້ານເທັກນິກຫລາຍຢ່າງ.ຕາມທີ່ໄດ້ບອກກັບທ່ານຜູ້ອ່ານໃນສະບັບທີ່ຜ່ານມາວ່າ **"ລາວເນັດ"** ຈະພິມ 6 ສະບັບຕໍ່ປີ.

ດັ່ງທີ່ທ່ານອາດຈະສັງເກດເຫັນ "ລາວເນັຕ" ໄດ້ມີເຄື່ອງໝາຍເອງໃນທີ່ສຸດ ນອກຈາກເຄື່ອງໝາຍ ບໍຣິສັທແມ່ asianet.com. ດ້ວຍຄວາມຮຽກຮ້ອງຈາກທ່ານຜູ້ອ່ານຢ່າງຫລວງຫລາຍລາວເນັຕໄດ້ເລີ້ມຄໍລັມໃໝ່ **"ໂຄສນາສ່ວນຕົວ"**

ພວກເຮົາ ຂໍຂອບໃຈ ກັບທ່ານທຸກຄົນທີ່ສົ່ງບົດຄວາມໄປໃຫ້ເຮົາ. ໃນຂນະດຽວກັນພວກເຮົາກໍຕ້ອງຂໍສະແດງຄວາມເສັຽໃຈທີ່ບໍ່ສາມາດຈັດພິມບົດຄວາມທຸກບົດໄດ້ເພາະພວກເຮົາ ໄດ້ຮັບບົດຂຽນຕ່າງໆມາຫລາຍທີ່ສຸດໃນທົ່ວທຸກແຫ່ງ.

ພ້ອມດຽວກັນນີ້ ລາວເນັຕ ກໍຂໍຂອບໃຈກັບທ່ານທຸກຄົນ ທີ່ໄດ້ຊ່ອຍເຮົາ ແຈກຢາຍນິຕຍະສາຣ ລາວເນັຕ ໃຫ້ກັບຊຸມຊົນລາວໄດ້ຢ່າງທົ່ວເຖິງໃນແຕ່ລະທ້ອງຖິ່ນຂອງທ່ານ.ດັ່ງທີ່ໄດ້ກ່າວມາກ່ອນໜ້ານີ້ ລາວເນັຕ ຈະພຍາຍາມເຮັດທຸກວິຖີທາງເພື່ອໃຫ້ສົມກັບການເຊື່ອຖືແລະການໃຫ້ຄວາມສນັບສນູນຊຸກຍູ້ມາຈາກທ່ານຜູ້ອ່ານທຸກທ່ານ.

**ດ້ວຍຄວາມປາຖນາດີ ນັບຖື ແລະຮັກແພງ,**

**ຈາກຜູ້ພິມ**


© Laonet Magazine, July 2006